- ເພື່ອສັງລວມກ່ຽວກັບສະຖິຕິກ່ຽວກັບການເຄື່ອນໄຫວ ສິດໃຊ້ທີ່ດິນ ແລະ ສິດນຳໃຊ້ທີ່ດິນແຕ່ລະຕອນ.





- **ເພື່ອຮັບປະກັນ ການຮັກສາຂໍ້ມູນຫຼັກຖານທີ່ສຳຄັນ ຂອງຕອນດິນທຸກຕອນທີ່ມີການເຄື່ອນໄຫວປ່ຽນແປງ ສິດໃຊ້ ແລະ ນຳໃຊ້ທີ່ດິນ ຢ່າງເປັນລະບົບ.**



- ເພື່ອຮັບປະກັນການຊົມໃຊ້ຊັບພະຍາກອນທີ່ມີຢູ່ຢ່າງຈຳກັດ ໃຫ້ມີຄວາມຍືນຍົງ ແລະ ເກີດປະໂຫຍດສູງສຸດ
- ເພື່ອເພີ່ມລາຍຮັບຈາກທີ່ດິນແລະຊັບພະຍາກອນທຳມະຊາດ ເຂົ້າງົບປະມານຂອງລັດ





**ສະໜັບສະໜຸນການພິມໂດຍ:**

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

Village Focus International

Rights-LINK

Mennonite Central Committee

**ສອບຖາມຂໍ້ມູນເພີ່ມເຕີມ:**

**ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ**

**ອົງການຄຸ້ມຄອງທີ່ດິນ**

ໂທ 021 263225, ແຟັກ 021 262300

ອົງການ ຄຸ້ມຄອງທີ່ດິນ ປະຈຳແຂວງ.

ອົງການ ຄຸ້ມຄອງທີ່ດິນ ປະຈຳເມືອງ.

ໜ່ວຍງານທີ່ດິນ ປະຈຳບ້ານ.

ອ ຄ ດ

ອົງການຄຸ້ມຄອງທີ່ດິນ

# ການຈົດທະບຽນສັນຍາແລະ ນິຕິກຳຕ່າງໆກ່ຽວກັບທີ່ດິນ



## 1. ຈຸດປະສົງ ວ່າດ້ວຍການຈົດທະບຽນສັນຍາ ແລະ ນິຕິກຳ ກ່ຽວກັບທີ່ດິນ

ເພື່ອເປັນການກຳນົດວິທີການຈັດຕັ້ງປະຕິບັດຢ່າງເປັນລະບົບ ກ່ຽວກັບການຄຸ້ມຄອງ ການຈົດທະບຽນນິຕິກຳທີ່ດິນ, ເປັນການບັນທຶກກ່ຽວກັບການເຄື່ອນໄຫວ ກ່ຽວກັບ ສິດນຳໃຊ້ທີ່ດິນ, ສິດໃຊ້ທີ່ດິນຂອງບຸກຄົນ ແລະ ນິຕິບຸກຄົນ.

## 2. ຫຼັກການ ການຈົດທະບຽນສັນຍາ ແລະ ນິຕິກຳກ່ຽວທີ່ດິນ

2.1 ການຈົດທະບຽນນິຕິກຳກ່ຽວກັບທີ່ດິນ ແມ່ນການບັນທຶກທຸກເຫດການເຄື່ອນໄຫວຂອງຕອນດິນຂອງບຸກຄົນ ຫຼື ນິຕິບຸກຄົນ  ເຊິ່ງສາມາດຈົດທະບຽນນິຕິກຳກ່ຽວກັບທີ່ດິນ ໄດ້ຢູ່ໃນອົງການຄຸ້ມຄອງທີ່ດິນ. ປະຈຳເມືອງ, ແຂວງ /ນະຄອນຫຼວງ.

2.2 ແມ່ນການເຄື່ອນໄຫວຂອງຕອນດິນເຊິ່ງພົວພັນທາງເສດຖະກິດ ລະຫວ່າງບຸກຄົນ ກັບ ບຸກຄົນ, ບຸກຄົນ ກັບ ນິຕິບຸກຄົນ ກ່ຽວກັບສິດໃຊ້ ແລະ ສິດນຳໃຊ້ທີ່ດິນເຊັ່ນ: ການມອບໂອນສິດນຳໃຊ້ທີ່ດິນ, ການສືບທອດມູນມໍຣະດົກ, ການເຊົ່າ, ການເອົາດິນໄປເປັນຫຼັກຊັບຄ້ຳປະກັນ, ການເອົາດິນໄປເປັນຮຸ້ນ ແລະ ອື່ນໆ






## ການຈົດທະບຽນນິຕິກຳກ່ຽວກັບທີ່ດິນ



### 1. ການຈົດທະບຽນປ່ຽນແປງສິດໃຊ້ ແລະ ສິດນຳໃຊ້ທີ່ດິນ

ການຈົດທະບຽນປ່ຽນແປງສິດນຳໃຊ້ທີ່ດິນແມ່ນການປ່ຽນແປງຜູ້ມີສິດນຳໃຊ້ທີ່ດິນ ເຊິ່ງໄດ້ພິສູດຫຼັກຖານກ່ຽວກັບຂອບເຂດແດນ, ສິດໃຊ້ທີ່ດິນ ແລະ ສິດນຳໃຊ້ທີ່ດິນ

### 2. ການຈົດທະບຽນການເຄື່ອນໄຫວສິດນຳໃຊ້ທີ່ດິນ

ການຈົດທະບຽນກ່ຽວກັບສິດນຳໃຊ້ທີ່ດິນ ແມ່ນການເຮັດສັນຍານິຕິກຳກ່ຽວກັບທີ່ດິນພາຍຫຼັງໄດ້ຮັບໃບຕາດິນແລ້ວ ເຊັ່ນ: ການເຊົ່າ ການຄ້ຳປະກັນເພື່ອກູ້ຢືມເງິນ ຫຼື ເອົາໄປເປັນຮຸ້ນ ແລະ ອື່ນໆ.







